## ທີນທາງເລືອກທາງອື່ນກ່ຽວກັບວຽກງານ

ຖ້າຫາກວ່າລູກຄ້າໄດ້ຮັບການບໍລິການດ້ານວຽກງານມາເປັນເວລາຢ່າງໜ້ອຍເກົ້າເດືອນ,ເຂົາເຈົ້າຈະເລືອກເອົາການບໍລິການ community inclusion ໄດ້.

Community Inclusion ຈະຕິດແທດບຸກຄົນຜູ້ທີ່ມີຄວາມເສັຽອົງຄະໃສ່ປະຊາຊົນຢູ່ໃນຊຸມນຸມຊົນທ້ອງຖິ່ນ. ອັນນີ້ຈະເຮັດໃຫ້ເຂົາເຈົ້າສາ ສາມາດກໍ່ສ້າງຄວາມສັມພັນນຳຄົນອື່ນຜູ້ທີ່ມີຄວາມສົນໃຈຄ້າຍຄຽງກັນກັບທ່ານ. ການບໍລິການອູ້ມຊູເຫລົ່ານີ້ໄດ້ຖືກເຮັດອອກມາໃສ່ສ່ວນບຸກຄົນໂດຍສະເພາະ ແລະ ຈະຊ່ວຍເຫລືອບຸກຄົນໃຫ້ເຂົ້າຮ່ວມນຳສາມະຄົມ, ມີສ່ວນຢູ່ໃນອົງການ ແລະ ກາຍເປັນສະມາຊິກ. ເພື່ອຮາຍຣະອຽດເພີ້ມເຕີມຈົ່ງແວ່ເຂົ້າຢັຽມ www.dshs.wa.gov/dda/county-best-practices.

ຜູ້ຈັດການຊ່ວຍເຫລືອເອກສານຂອງ DDA ສາມາດຊ່ຽຍເຫລືອນຳຄຳຮ້ອງຂໍເອົາການຍົກເວັ້ນໃນກົດຣະບຽບເກົ້າເດືອນ.




**ຫ້ອງຖິ່ນ 1 ພາກເໜືອ**
Spokane
**1-800-462-0624**

**ຫ້ອງຖິ່ນ 1 ພາກໃຕ້**
Yakima
**1-800-822-7840**

**ຫ້ອງຖິ່ນ 2 ພາກເໜືອ**
Everett
**1-800-788-2053**

**ຫ້ອງຖິ່ນ 2 ພາກໃຕ້**
Seattle
**1-800-314-3296**

**ຫ້ອງຖິ່ນ 3 ພາກເໜືອ**
Tacoma
**1-800-248-0949**

**ຫ້ອງຖິ່ນ 3 ພາກໃຕ້**
Tumwater
**1-800-339-8227**

Washington State Department of Social & Health Services

*Transforming lives*

DSHS 22-1463 LA (Rev. 9/19) Laotian

# ການບໍລິການ ອູ້ມຊູດ້ານວຽກງານ

## ສຳລັບຜູ້ໃຫຍ່ທີ່ມີ ວາມເສັຽອົງຄະດ້ານ ການຈະເຣີນເຕີບໂຕ





Washington State Department of Social & Health Services

*Transforming lives*

**Developmental Disabilities Administration**

## Department of Social and Health Services' (DSHS) Developmental Disabilities Administration (DDA)

*ເອົາການບໍລິການອູ້ມຊູດ້ານວຽກງານໃຫ້ແກ່ຜູ້ໃຫຍ່ທີ່ມີເງື່ອນໄຂໄດ້ຮັບ.ເງື່ອນໄຂເຫມາະສົມໄດ້ຮັບຈະຖືກພິຈາຣະນາເບິ່ງໂດຍການຕີຣາຄາປະເມີນຜົນ DDA ຂອງແຕ່ລະບຸກຄົນ. ລູກຄ້າ DDA ສາມາດຮູ້ຈັກວ່າມີຫ້ອງການວຽກງານທີ່ມີຄຸນນະວຸດທິບ່ອນໃດແດ່ທີ່ມີໄວ້ໃຫ້ ແລະ ການບໍຣິການແນວໃດແດ່ຈະຖືກເອື້ອເຟື້ອໃຫ້ໂດຍຜ່ານຜູ້ຈັດການເອກສານຂອງເຂົາເຈົ້າ. ຄວາມເຫມາະສົມທີ່ດີແມ່ນສຳຄັນຕໍ່ຄວາມສຳເຣັດ. ລູກຄ້າໄດ້ຖືກຊຸກຍູ້ແນະນຳໃຫ້ສຳພາດຫ້ອງການວຽກງານທີ່ມີຢູ່ ແລະ ເລືອກເອົາ ບ່ອນນຶ່ງທີ່ຈະເອົາການອູ້ມຊູທີ່ຕ້ອງການໃຫ້.*

## ເສັ້ນທາງເດີນໄປສູ່ວຽກງານຂອງທ່ານ

ພາຍໃຕ້ນະໂຍບາຍຂອງຣັດວໍຊິງຕັນ, ບຸກຄົນທີ່ມີອາຍຸເຮັດວຽກໄດ້ 21 ຮອດ 61 ປີ, ໄດ້ຖືກຮັບຮູ້ວ່າເປັນສະມາຊິກທີ່ມີຄຸນຄ່າຂອງຊຸມນຸມຊົນຂອງຊຸມນຸມຊົນຜູ້ທີ່ສົມຄວນທີ່ຈະໄດ້ເຮັດວຽກເຕັມເມັດເຕັມຫນ່ວຍ, ທີ່ມີໂອກາດສຳລັບຄວາມກ້າວຫນ້າ. ເສັ້ນທາງເດີນນຳພາໄປສູ່ວຽກງານເປັນເສັ້ນທາງສະເພາະຂອງລູກຄ້າຕໍ່ການຊອກວຽກງານ,ມັນເລີ້ມຕົ້ນດ້ວຍແຜນການຊຶ່ງພິຈາຣະນາເບິ່ງເປົ້າຫມາຍວິຊາຊີບ, ຄວາມຕ້ອງການ, ແລະ ຫົນທາງທີ່ດີທີ່ສຸດທີ່ຈະເອົາການອູ້ມຊູໃຫ້ແກ່ທ່ານ.

**ເສັ້ນທາງເດີນໄປສູ່ວຽກງານ** ອາດຈະລວມເອົາ:

**ການສຳພາດເລີ້ມຕົ້ນ**
ການພົບກັນເທື່ອທຳອິດເພື່ອຈະເກັບກຳເອົາ ແລະ ແລກປ່ຽນຣາຍຣະອຽດທົ່ວໄປ.

**ການຄົ້ນພົບ**
ການເຂົ້າຫາຈຸດຈໍ່ໃສ່ບຸກຄົນເພື່ອນການຮຽນຮູ້ສິ່ງທີ່ລູກຄ້າມັກ ແລະ ສິ່ງທີ່ລູກຄ້າບໍ່ມັກ, ຄວາມຊອບໃຈໃນວຽກງານ, ຈຸດເປົ້າຫມາຍ ແລະ ຄວາມຊຳນານ.

**ການກະຕຽມໃສ່ວຽກງານ**
ກິຈກັມການຕຽມພ້ອມສຳລັບວຽກງານເຊັ່ນວ່າປະສົບປະການລອງເຮັດວຽກເບິ່ງ, ການອູ້ມຊູອາສາສະມັກຣະຍະສັ້ນ, ແລະ ການຝຶກແອບການຂົນສົ່ງໄປມາ.

**ການໂຄສະນາການີ່**
ການຊີ້ບອກ ແລະ ການເຈຣະຈາວຽກງານ, ການກໍ່ສ້າງຄວາມສັມພັນນຳນາຍຈ້າງ ແລະ ການພັດທະນາວຽກງານ.

**ການຝຶກສອນວຽກງານ**
ການອູ້ມຊູທີ່ຕ້ອງການເພື່ອຈະເຮັດຫນ້າທີ່ ແລະ ເຮັດໃຫ້ດີຂື້ນໃນບ່ອນເຮັດວຽກງານ.

**ການຮັກສາວຽກງານໄວ້**
ການອູ້ມຊູເພື່ອຈະຮັກສາວຽກງານໄວ້, ຮັກສາຄວາມສັມພັນທີ່ດີນຳນາຍຈ້າງ, ຊີ້ບອກໂອກາດ, ເຈຣະຈາການຂຶ້ນເງິນ, ການເລື່ອນຊັ້ນ ແລະ/ຫລື ສະວັດດີການເພີ້ມຂື້ນ.

## ຊະນິດຂອງການບໍຣິການອູ້ມຊູດ້ານວຽກງານ

**ວຽກງານທີ່ຖືກອູ້ມຊູສ່ວນບຸກຄົນ**
ຊ່ວຍເຫລືອຜູ້ຊອກວຽກໃຫ້ໄດ້ວຽກເຮັດ ແລະ ຮັກສາວຽກງານໃຫ້ມີເງິນຄ່າແຮງງານຢູ່ໃນ ຫລື ສູງກວ່າເງິນຄ່າແຮງງານຕ່ຳສຸດຂອງຣັດຢູ່ໃນຕະລາດແຮງງານທົ່ວໄປ. ການອູ້ມຊູສຳລັບໂອກາດວຽກງານ ແລະ ການພັດທະນາວິຊາຊີບໄດ້ຖືກອີງໃສ່ ຄວາມຕ້ອງການ, ຄວາມສົນໃຈ ແລະ ຄວາມສາມາດຂອງສ່ວນບຸກຄົນ.

**ວຽກງານທີ່ຖືກອູ້ມຊູໂດຍກຸ່ມຫ**
ເອົາການຄວບຄຸມເບິ່ງນຳທີ່ດຳເນີນຕໍ່ໄປ ແລະ ການອູ້ມຊູຮ່ວມກັນໃຫ້ສຳລັບສອງຫາແປດຄົນຜູ້ທີ່ມີຄວາມເສັຽອົງຄະຢູ່ໃນສະພາບແວດລ້ອມຂອງຊຸມນຸມຊົນ. ການອູ້ມຊູມີຈຸດປະສົງທີ່ຈະນຳພາໄປສູ່ໄດ້ວຽກງານສ່ວນຕົວເຮັດ. ຕົວຢ່າງລວມເອົາ: ຄົນງານທຳຄວາມສະອາດ, ຄົນເຮັດເດີ່ນບ້ານ ຫລື ຄົນງານອື່ນໆ.

**ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບຜູ້ບໍຣິການວຽກງານທ້ອງຖິ່ນໃຫ້ເຂົ້າເບິ່ງແວບໄຊທ໌ບ່ອນຊອກຫາຜູ້ບໍຣິການໄດ້ທີ່:**
www.statedata.info/washington/search

ແວບໄຊທ໌ນີ້ໃຫ້ຣາຍຣະອຽດກ່ຽວກັບ:

- ຜູ້ບໍຣິການບ່ອນໃດມີຜົນອອກມາດີທີ່ສຸດ
- ຄຳຖາມອັນໃດແດ່ທີ່ຈະຖາມເມື່ອເວລາເລືອກເອົາຜູ້ບໍຣິການ
- ແມ່ນຫຍັງຈະເຮັດໃຫ້ເປັນຜູ້ບໍຣິການທີ່ມີຄຸນນະພາບດີ



## ການຄິດໄລ່ຊົ່ວໂມງຂອງການອູ້ມຊູ

ຈຳນວນຂອງຊົ່ວໂມງຂອງການອູ້ມຊູທີ່ຖືກເອົາໃຫ້ໄດ້ຖືກຄິດໄລ່ໂດຍ ອີງຕາມຣະດັບການອູ້ມຊູ ແລະ ປະວັດເງິນຄ່າແຮງງານຂອງບຸກຄົນ.

**ຣະດັບຂອງການອູ້ມຊູຕົກຢູ່ພາຍໃຕ້ຂະແນງສາມຢ່າງຕໍ່ລົງໄປນີ້:**

1. ຄວາມສະຫລາດສະຫລຽວຕ່ຳກ່າວເຖິງຄົນໃດຄົນນຶ່ງຜູ້ທີ່ເປັນເອກະ ຣາດບໍ່ຂື້ນນຳໃຜຢູ່ໃນຊຸມນຸມຊົນ; ຕ້ອງການການອູ້ມຊູນຳວຽກງານ ຫນ້ອຍນຶ່ງ; ຕິດຕໍ່ສື່ສານດີນຳຄົນອື່ນ; ແລະສາມາດຮັກສາສຸຂະພາບແລະ ຄວາມປອດພັຍສ່ວນຕົວໄດ້ໃນເວລາສ່ວນຫລາຍໂດຍປາສຈາກການຄວບຄຸມເບິ່ງນຳ.
2. ຄວາມສະຫລາດສະຫລຽວປານກາງກ່າວເຖິງຄົນໃດຄົນນຶ່ງຜູ້ທີ່ເປັນເອກະຣາດບໍ່ຂື້ນນຳໃຜຢູ່ໃນຊຸມນຸມຊົນໃນບາງເວລາ; ຕ້ອງການການອູ້ມຊູນຳວຽກງານປານກາງ;ສາມາດທີ່ຈະຮັກສາສຸຂະພາບແລະຄວາມປອດພັຍໄວ້ໄດ້ຢູ່ໃນຊຸມນຸມຊົນສຳລັບຣະຍະເວລາສັ້ນໆ; ແລະຈະຕ້ອງການການຄວບຄຸມເບິ່ງນຳບາງເທື່ອ, ການຝຶກຝົນຫລືການຊ່ວຍເຫລືອທາງຮ່າງກາຍສ່ວນນຶ່ງນຳກິຈກັມຂອງຊຸມນຸມຊົນ.
3. ຄວາມສະຫລາດສະຫລຽວສູງກ່າວເຖິງຄົນໃດຄົນນຶ່ງຜູ້ທີ່ຕ້ອງການການອູ້ມຊູຢູ່ໃນຊຸມນຸມຊົນຕະລອດເວລາເພື່ອຈະຮັກສາສຸຂະພາບແລະຄວາມປອດພັຍໄວ້ໄດ້;ຕ້ອງການການອູ້ມຊູນຳວຽກງານຫລາຍທີ່ສຸດ;ແລະຕ້ອງການການຄວບຄຸມເບິ່ງນຳຢູ່ເລື້ອຍໆ,ການຝຶກຝົນຫລືການຊ່ວຍເຫລືອທາງຮ່າງກາຍເຕັມທີ່ນຳກິຈກັມຂອງຊຸມນຸມຊົນສ່ວນຫລາຍ ຫລື ທຸກໆເວລາ.

ປະວັດເງິນຄ່າຈ້າງແຮງງານໄດ້ຖືກຄິດໄລ່ໂດຍເງິນທີ່ບຸກຄົນນັ້ນຫາມາໄດ້ໃນປີຜ່ານມາ. ປະວັດເງິນຄ່າຈ້າງແຮງງານມີຢູ່ສາມ ຂະແນງ:

1. ວຽກງານທີ່ດຳເນີນຕໍ່ມາ: ລູກຄ້າໄດ້ເຮັດວຽກຫາເງິນໄດ້ຈາກວຽກງານເປັນເວລາເກົ້າເດືອນຂອງປີຜ່ານມາ.
2. ວຽກງານໃນຫມໍ່ໆມານີ້/ຂາດເປັນຕອນ: ລູກຄ້າໄດ້ເຮັດວຽກຫາເງິນໄດ້ຈາກວຽກງານເປັນເວລາຢ່າງຫນ້ອຍນຶ່ງເດືອນຂອງປີຜ່ານມາ.
3. ບໍ່ໄດ້ເຮັດວຽກງານ:ບຸກຄົນບໍ່ມີວຽກງານເຮັດຫລືບໍ່ໄດ້ຫາເງິນໄດ້ສຳລັບປີຜ່ານມາ.

ບຸກຄົນນັ້ນເຮັດວຽກມາດົນປານໃດ,ຫາເງິນມາໄດ້ແລະຮຽນຮູ້ວຽກງານຂອງເຂົາເຈົ້າດົນປານໃດ,ການອູ້ມຊູດ້ານວຽກງານຫນ້ອຍປານນັ້ນທີ່ຈະຕ້ອງການ.

**ເພື່ອຣາຍຣະອຽດເພີ້ມເຕີມ,**
**ແວ່ເຂົ້າປັຽມ:**
**www.dshs.wa.gov/dda**